ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 08 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 22 JUL 2022

# ຂໍ້ຕົກລົງ
# ວ່າດ້ວຍການຮັບຮອງບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 224/ສຄຄຊ, ລົງວັນທີ 23 ມິຖຸນາ 2022.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ລະບຽບການ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວຂອງ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ໃນການໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ເພື່ອອຳນວຍຄວາມສະດວກ ແລະ ເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານການໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບຢູ່ ສປປ ລາວ ແນໃສ່ຮັບປະກັນໃຫ້ແກ່ການເຄື່ອນໄຫວດັ່ງກ່າວ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 ການຮັບຮອງບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ**

ການຮັບຮອງ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ແມ່ນການອະນຸຍາດໃຫ້ ບໍລິສັດທີ່ໄດ້ຮັບການສ້າງຕັ້ງຈາກ ພາຍໃນ ແລະ ຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້.

ມາດຕາ 3 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຢູ່ ສປປ ລາວ.

## ໝວດທີ 2

## ການຮັບຮອງບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ

ມາດຕາ 4 ເງື່ອນໄຂການຮັບຮອງ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ພາຍໃນ

ບໍລິສັດທີ່ສ້າງຕັ້ງຢູ່ພາຍໃນ ສປປ ລາວ ທີ່ມີຈຸດປະສົງໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນບໍລິສັດທີ່ດຳເນີນທຸລະກິດ ກ່ຽວກັບການໃຫ້ບໍລິການສະໜອງຂໍ້ມູນຂ່າວສານ ເປັນຕົ້ນ ສັງລວມ, ຄົ້ນຄວ້າ, ວິເຄາະວິໄຈ ຫຼື ສ້າງບົດລາຍງານ ກ່ຽວກັບຂໍ້ມູນຂ່າວສານທີ່ຕົນໄດ້ຮັບຈາກແຫຼ່ງຕ່າງໆ ທີ່ໄດ້ຮັບອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ຂຶ້ນທະບຽນວິສາຫະກິດ ແລະ ຂຶ້ນທະບຽນການເສຍອາກອນ ຢ່າງຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3. ມີສຳນັກງານ ຫຼື ຫ້ອງການ ທີ່ຕັ້ງຢູ່ ສປປ ລາວ;
4. ມີອຸປະກອນ, ເຄື່ອງມື ແລະ ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ເພື່ອຮັບໃຊ້ໃນການເຄື່ອນໄຫວທຸລະກິດ ແລະ ມີບຸກຄະລາກອນ ໃນຈຳນວນທີ່ເໝາະສົມ ເພື່ອຮອງຮັບໃຫ້ແກ່ການເຄື່ອນໄຫວວຽກງານກ່ຽວກັບການໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ;
5. ມີຮ່າງສັນຍາເອົາຂໍ້ມູນກັບ ຜູ້ສະໜອງຂໍ້ມູນໃຫ້ຕົນ ແລະ ມີຮ່າງສັນຍາບໍລິການກັບ ລູກຄ້າຂອງຕົນ;
6. ມີທຶນຈົດທະບຽນ ຢ່າງໜ້ອຍ 100.000.000 ກີບ;
7. ມີບຸກຄະລາກອນທີ່ມີຄວາມຮູ້ ແລະ ປະສົບການໃນການຄົ້ນຄວ້າ, ວິເຄາະ ແລະ ລາຍງານ ດ້ານຂໍ້ມູນຂ່າວສານທາງດ້ານ ການເງິນ, ເສດຖະກິດ ຫຼື ວຽກງານຫຼັກຊັບ ຢ່າງໜ້ອຍ 3 ປີ ນັບແຕ່ວັນຍື່ນຄຳຮ້ອງ ແລະ ເອກະສານປະກອບຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ;
8. ເງື່ອນໄຂອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕາ 5 ເງື່ອນໄຂການຮັບຮອງ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຕ່າງປະເທດ

ບໍລິສັດທີ່ສ້າງຕັ້ງຢູ່ຕ່າງປະເທດ ທີ່ມີຈຸດປະສົງເຂົ້າມາຮັບຮອງເປັນ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຢູ່ ສປປ ລາວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນບໍລິສັດທີ່ດຳເນີນທຸລະກິດກ່ຽວກັບການໃຫ້ບໍລິການສະໜອງຂໍ້ມູນຂ່າວສານ ຈາກຕ່າງປະເທດ ທີ່ໄດ້ຮັບອະນຸຍາດຈາກອົງການທີ່ກ່ຽວຂ້ອງຂອງຕ່າງປະເທດ;
2. ຂຶ້ນທະບຽນວິສາຫະກິດ ແລະ ຂຶ້ນທະບຽນການເສຍອາກອນ ຢ່າງຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວ ຂ້ອງຂອງ ສປປ ລາວ;
3. ມີສຳນັກງານ ຫຼື ຫ້ອງການ ທີ່ຕັ້ງຢູ່ ສປປ ລາວ ຫຼື ຢູ່ຕ່າງປະເທດ;

4. ມີອຸປະກອນ, ເຄື່ອງມື ແລະ ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ເພື່ອຮັບໃຊ້ໃນການເຄື່ອນໄຫວທຸລະກິດ ແລະ ມີບຸກຄະລາກອນ ໃນຈຳນວນທີ່ເໝາະສົມ ເພື່ອຮອງຮັບໃຫ້ແກ່ການເຄື່ອນໄຫວວຽກງານກ່ຽວກັບການໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ;

5. ມີປະສົບການໃນການເຄື່ອນໄຫວວຽກງານ ກ່ຽວກັບການໃຫ້ບໍລິການສະໜອງຂໍ້ມູນມາແລ້ວ ຢ່າງໜ້ອຍ 2 ປີ ຍ້ອນຫຼັງ ນັບແຕ່ປີຍື່ນຄຳຮ້ອງຂໍການຮັບຮອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

6. ເປັນບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຂອງປະເທດ ພາກພື້ນ ແລະ ສາກົນ;

7. ມີຮ່າງສັນຍາເອົາຂໍ້ມູນກັບ ຜູ້ສະໜອງຂໍ້ມູນໃຫ້ຕົນ ແລະ ມີຮ່າງສັນຍາບໍລິການກັບ ລູກຄ້າຂອງຕົນ;

8. ມີບຸກຄະລາກອນທີ່ມີຄວາມຮູ້ ແລະ ປະສົບການໃນການຄົ້ນຄວ້າ, ວິເຄາະ ແລະ ລາຍງານ ດ້ານຂໍ້ມູນຂ່າວສານທາງດ້ານ ການເງິນ, ເສດຖະກິດ ຫຼື ວຽກງານຫຼັກຊັບ ຢ່າງໜ້ອຍ 3 ປີ ນັບແຕ່ວັນຍື່ນຄຳຮ້ອງ ແລະ ເອກະສານປະກອບຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ;

9. ເງື່ອນໄຂອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 6 ເອກະສານປະກອບການຮັບຮອງເປັນບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ**

ເອກະສານປະກອບການຮັບຮອງເປັນ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ມີດັ່ງນີ້:

1. ຄຳຮ້ອງຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

2. ສຳເນົາໃບທະບຽນວິສາຫະກິດຂອງ ບໍລິສັດທີ່ມີຈຸດປະສົງສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ;

3. ສຳເນົາໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການໃຫ້ບໍລິການສະໜອງຂໍ້ມູນຈາກພາກສ່ວນກ່ຽວຂ້ອງ (ຖ້າມີ);

4. ບັນຊີລາຍຊື່ ແລະ ຊີວະປະຫວັດຫຍໍ້ຂອງ ຜູ້ບໍລິຫານ ລວມທັງ ບຸກຄະລາກອນທີ່ໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ, ສຳເນົາ ບັດປະຈຳຕົວ ຫຼື ສຳມະໂນຄົວ (ສຳລັບຄົນລາວ) ແລະ ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ລວມທັງ ໃບແຈ້ງໂທດ ຂອງບຸກຄົນດັ່ງກ່າວ ບໍ່ໃຫ້ກາຍ 3 ເດືອນຍ້ອນຫຼັງ ນັບແຕ່ວັນຍື່ນເອກະສານປະກອບຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ;

5. ສຳເນົາກົດລະບຽບຂອງ ບໍລິສັດທີ່ມີຈຸດປະສົງໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ;

6. ໃບຢັ້ງຢືນການເປັນ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຂອງປະເທດ ພາກພື້ນ ແລະ ສາກົນ ຈາກພາກສ່ວນທີ່ກ່ຽວຂ້ອງ ສຳລັບບໍລິສັດຕ່າງປະເທດ;

7. ແຜນການເຄື່ອນໄຫວທຸລະກິດຂອງຕົນ ຢ່າງໜ້ອຍ 3 ປີ ຕໍ່ໜ້າ ພາຍຫຼັງທີ່ໄດ້ຮັບການຮັບຮອງ ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

8. ສຳເນົາຮ່າງສັນຍາ ກັບ ຜູ້ສະໜອງຂໍ້ມູນໃຫ້ຕົນ ແລະ ຮ່າງສັນຍາໃຫ້ບໍລິການ ກັບ ລູກຄ້າຂອງຕົນ;

9. ໃບປະກາດສະນິຍະບັດທີ່ຮຽນຈົບສາຂາທີ່ກ່ຽວຂ້ອງກັບຂໍ້ມູນຂ່າວສານ ຫຼື ໃບຢັ້ງຢືນປະສົບການໃນການຄົ້ນຄວ້າ, ວິເຄາະ ແລະ ລາຍງານ ດ້ານຂໍ້ມູນຂ່າວສານທາງດ້ານ ການເງິນ, ເສດຖະກິດ ຫຼື ວຽກງານຫຼັກຊັບ;

10. ເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 7 ການພິຈາລະນາການຮັບຮອງເປັນບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາເອກະສານປະກອບ ການຮັບຮອງເປັນ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ພາຍໃນເວລາ 30 ວັນ ນັບແຕ່ວັນໄດ້ຮັບ ເອກະສານປະກອບ ຢ່າງ

ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ກໍລະນີປະຕິເສດ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ໃຫ້ແກ່ຜູ້ຮ້ອງຂໍຊາບ.

ໃນເວລາພິຈາລະນາຫາກເຫັນວ່າມີຄວາມຈໍາເປັນ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາເອກະສານ ແລະ ຂໍ້ມູນເພີ່ມເຕີມ ຫຼື ເຊີນຜູ້ທີ່ກ່ຽວຂ້ອງມາຊີ້ແຈງ ຫຼື ໃຫ້ຂໍ້ມູນ.

ພາຍຫຼັງ ໄດ້ຮັບການຮັບຮອງເປັນ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຈາກສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລ້ວ ຕ້ອງປະກາດໃຫ້ແກ່ມວນຊົນຊາບ ຜ່ານພາຫານະສື່ມວນຊົນ ພາຍໃນ 5 ວັນລັດຖະການ ຕໍ່ເນື່ອງ ນັບແຕ່ວັນທີ່ໄດ້ຮັບການຮັບຮອງເປັນຕົ້ນໄປ.

**ມາດຕາ 8 ຄ່າບໍລິການ**

ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຕ້ອງເສຍຄ່າບໍລິການໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄ່າຍື່ນສໍານວນຄໍາຮ້ອງຂໍໃບຮັບຮອງເປັນ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຈໍານວນ 5.000.000 ກີບ ຕໍ່ຄັ້ງ ແລະ ຕ້ອງຊໍາລະເງິນພາຍໃນວັນທີ່ໄດ້ຍື່ນສໍານວນຄໍາຮ້ອງຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
2. ຄ່າອອກໃບຮັບຮອງເປັນ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຈໍານວນ 10.000.000 ກີບ ຕໍ່ຄັ້ງ ແລະ ຕ້ອງຊໍາລະເງິນພາຍໃນວັນທີ່ໄດ້ຮັບໃບຮັບຮອງ;
3. ຄ່າຕໍ່ໃບຮັບຮອງເປັນ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຈໍານວນ 10.000.000 ກີບ ຕໍ່ຄັ້ງ ແລະ ຕ້ອງຊໍາລະເງິນພາຍໃນວັນທີ່ໄດ້ຮັບໃບຮັບຮອງ;
4. ຄ່າຄຸ້ມຄອງປະຈໍາປີ ຈໍານວນ 5.000.000 ກີບ ແລະ ຕ້ອງຊໍາລະເງິນພາຍໃນ ໄຕມາດ 1 ຂອງປີຖັດໄປ. ຍົກເວັ້ນປີທີ່ໄດ້ໃບຮັບຮອງເປັນ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ໃນໄລຍະ 6 ເດືອນທ້າຍປີ ແມ່ນຈະບໍ່ໄດ້ເສຍຄ່າຄຸ້ມຄອງປະຈໍາປີ ໃນປີນັ້ນ.

## ໝວດທີ 3
## ຂອບເຂດການໃຫ້ບໍລິການ, ປະເພດຂອງຂໍ້ມູນ, ອາຍຸການຮັບຮອງ ແລະ ການຕໍ່ອາຍຸການຮັບຮອງການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ

**ມາດຕາ 9 ຂອບເຂດການໃຫ້ບໍລິການ**

ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ສາມາດໃຫ້ບໍລິການ ດັ່ງນີ້:

1. ສັງລວມຂໍ້ມູນຈາກ ຕະຫຼາດຫຼັກຊັບ ແລະ ບໍລິສັດຫຼັກຊັບ;
2. ຄົ້ນຄວ້າ, ວິເຄາະ ແລະ/ຫຼື ການສ້າງບົດລາຍງານ ກ່ຽວກັບ ຂໍ້ມູນທີ່ຕົນໄດ້ຮັບຈາກ ຕະຫຼາດຫຼັກຊັບ ແລະ ບໍລິສັດຫຼັກຊັບ.

**ມາດຕາ 10 ປະເພດຂອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ**

ປະເພດຂອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ປະກອບມີຂໍ້ມູນ ດັ່ງນີ້:

1. ຂໍ້ມູນ ກ່ຽວກັບຫຼັກຊັບ ເປັນຕົ້ນ: ຮຸ້ນ, ຮຸ້ນກູ້, ພັນທະບັດລັດຖະບານ ແລະ ຫຼັກຊັບປະເພດອື່ນ ທີ່ມີການຊື້ ຂາຍຜ່ານ ຕະຫຼາດຫຼັກຊັບ;

2. ຂໍ້ມູນການຊື້ ຂາຍຫຼັກຊັບ (Securities trading information) ເປັນຕົ້ນ: ຈຳນວນຫຼັກຊັບທີ່ຖືກຈັບຄູ່ຊື້ ຂາຍ (ໂດຍແຍກໃຫ້ເຫັນການຄ້າຫຼັກຊັບໃນນາມບໍລິສັດຫຼັກຊັບ ແລະ ໃນນາມລູກຄ້າ), ລາຄາຫຼ້າສຸດ, ການປ່ຽນແປງຂອງລາຄາ, ອັດຕາສ່ວນການປ່ຽນແປງຂອງລາຄາ ແລະ ມູນຄ່າການຊື້ ຂາຍ, ດັດຊະນີໃນຕະຫຼາດຫຼັກຊັບ (Market index), ການປ່ຽນແປງຂອງດັດຊະນີໃນແຕ່ລະວັນ, ດັດຊະນີເປີດຕະຫຼາດ, ລະດັບດັດຊະນີສູງສຸດ-ຕ່ຳສຸດ, ເສັ້ນສະແດງການເຄື່ອນໄຫວດັດຊະນີ, ຂໍ້ມູນດັດຊະນີຍ້ອນຫຼັງ, ຂໍ້ມູນການຊື້ ຂາຍຫຼັກຊັບຍ້ອນຫຼັງ, ລາຍຊື່ຫຼັກຊັບທີ່ໃຊ້ໃນການຄຳນວນດັດຊະນີ, ຂໍ້ມູນຂອງຮຸ້ນແຕ່ລະຕົວ ແລະ ຂໍ້ມູນອື່ນທີ່ກ່ຽວຂ້ອງກັບການຊື້ ຂາຍຫຼັກຊັບ;

3. ເອກະສານລາຍງານການເງິນ (Financial statement information) ຕາມທີ່ໄດ້ກຳນົດໄວ້ໃນ ລະບຽບການທີ່ກ່ຽວຂ້ອງ;

4. ຂໍ້ມູນ ກ່ຽວຂ້ອງກັບບໍລິສັດຈົດທະບຽນ (Listed companies information) ເປັນຕົ້ນ: ຂໍ້ມູນທົ່ວໄປ, ຂໍ້ມູນຂ່າວປະຈຳວັນ, ຂໍ້ມູນກ່ຽວກັບຫຼັກຊັບ, ຂໍ້ມູນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ, ຂໍ້ມູນການປ່ຽນແປງທີ່ສຳຄັນ ແລະ ຂໍ້ມູນອື່ນກ່ຽວຂ້ອງກັບບໍລິສັດຈົດທະບຽນ;

5. ຂໍ້ມູນ ກ່ຽວກັບບົດວິເຄາະຫຼັກຊັບ, ການໃຫ້ຄຳປຶກສາດ້ານການລົງທຶນ, ຄຳແນະນຳ ກ່ຽວກັບການຊື້ກິດຈະການ, ການປັບປຸງໂຄງສ້າງ ແລະ ຍຸດທະສາດ;

6. ຂໍ້ມູນອື່ນ ທີ່ໄດ້ເປີດເຜີຍຕໍ່ມວນຊົນ ຜ່ານເວັບໄຊຂອງຕະຫຼາດຫຼັກຊັບ ແລະ ຕາມການກຳນົດຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ມາດຕາ 11 ການນຳໃຊ້ຂໍ້ມູນກ່ຽວກັບວຽກງານຫຼັກຊັບ

ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ທີ່ໄດ້ຮັບຂໍ້ມູນຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ສາມາດນຳໃຊ້ຂໍ້ມູນດັ່ງກ່າວເຂົ້າໃນການ ຄົ້ນຄວ້າ, ວິເຄາະ ແລະ/ຫຼື ສ້າງບົດລາຍງານ ກ່ຽວກັບຂໍ້ມູນທີ່ຕົນໄດ້ຮັບຈາກ ຕະຫຼາດຫຼັກຊັບ ແລະ ບໍລິສັດຫຼັກຊັບ ແລະ ນຳໃຊ້ເຂົ້າໃນເປົ້າໝາຍອື່ນຕາມການອະນຸຍາດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ມາດຕາ 12 ອາຍຸການຮັບຮອງບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ

ໃບຮັບຮອງ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ແມ່ນມີອາຍຸການ 3 ປີ ນັບແຕ່ວັນທີ່ໄດ້ຮັບໃບຮັບຮອງ ເປັນຕົ້ນໄປ ແລະ ສາມາດຕໍ່ອາຍຸການຮັບຮອງໄດ້.

## ມາດຕາ 13 ການຕໍ່ອາຍຸການຮັບຮອງບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ

ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ທີ່ຕ້ອງການຕໍ່ອາຍຸການຮັບຮອງ ເພື່ອສືບຕໍ່ໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 4, ມາດຕາ 5 ແລະ ປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ເພື່ອຍື່ນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພິຈາລະນາ ຢ່າງໜ້ອຍ 45 ວັນ ກ່ອນວັນໝົດອາຍຸການຮັບຮອງ.

## ມາດຕາ 14 ການໂຈະໃບຮັບຮອງການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ

ໃບຮັບຮອງການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຈະຖືກໂຈະໃນກໍລະນີ ໃດໜຶ່ງ ຫຼື ທັງໝົດດັ່ງນີ້:

1. ໄດ້ຮັບການຮັບຮອງ ບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ;

2. ປະຕິບັດເກີນ ຫຼື ບໍ່ປະຕິບັດ ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

3. ມີຄຳສັ່ງຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ ໃຫ້ໂຈະການໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ;

4. ຜູ້ບໍລິຫານ ຖືກດຳເນີນຄະດີ ຫຼື ຖືກຮ້ອງຟ້ອງ ກ່ຽວກັບການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ;

5. ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ບໍ່ສົ່ງຜົນສະທ້ອນຮ້າຍແຮງຕໍ່ລະບົບຕະຫຼາດທຶນ ຕາມການພິຈາລະນາຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

6. ບໍ່ປະຕິບັດພັນທະອາກອນ ແລະ ພັນທະທາງດ້ານການເງິນອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;

7. ເຄື່ອນໄຫວເອົາຂໍ້ມູນອື່ນ ທີ່ບໍ່ກ່ຽວຂ້ອງກັບວຽກງານຫຼັກຊັບ ເປັນຕົ້ນ: ຂໍ້ມູນ ທາງດ້ານການເມືອງ, ເສດຖະກິດ-ສັງຄົມ, ວັດທະນະທຳ ແລະ ຂໍ້ມູນອື່ນທີ່ບໍ່ກ່ຽວຂ້ອງ ທີ່ເປັນການລະເມີດກົດໝາຍຂອງ ສປປ ລາວ;

8. ຂາດເງື່ອນໄຂໃດໜຶ່ງ ຫຼື ທັງໝົດ ຕາມກຳນົດໄວ້ໃນ ມາດຕາ 4 ຫຼື ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້;

9. ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 21 ຂອງຂໍ້ຕົກລົງສະບັບນີ້;

10. ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ພາຍຫຼັງຖືກສັ່ງໂຈະການການໃຫ້ບໍລິການ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຕ້ອງປັບປຸງແກ້ໄຂ ຕາມກຳນົດເວລາທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ກຳນົດໄວ້.

**ມາດຕາ 15 ການຖອນໃບຮັບຮອງເປັນບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ**

ໃບຮັບຮອງເປັນ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຈະຖືກຖອນໃນກໍລະນີ ໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ບໍ່ແກ້ໄຂບັນຫາ ຕາມສາເຫດຂອງການສັ່ງໂຈະການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ພາຍໃນເວລາທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ກຳນົດໄວ້;

2. ຕາມການຮ້ອງຂໍຂອງ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ໂດຍມີມະຕິກອງປະຊຸມຜູ້ຖືຮຸ້ນ;

3. ໄດ້ຮັບການຮັບຮອງ ບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ຊຶ່ງສ້າງຜົນເສຍຫາຍຢ່າງຮ້າຍແຮງຕໍ່ລະບົບຕະຫຼາດທຶນ;

4. ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ສົ່ງຜົນສະທ້ອນຮ້າຍແຮງຕໍ່ລະບົບຕະຫຼາດທຶນ ຕາມການພິຈາລະນາຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

5. ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ພາຍຫຼັງທີ່ຖືກຖອນໃບຮັບຮອງເປັນ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ແລ້ວ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ປະກາດຕໍ່ມວນຊົນ ຢ່າງກວ້າງຂວາງ ໂດຍຜ່ານພາຫະນະສື່ມວນຊົນ ເປັນເວລາ 7 ວັນຕໍ່ເນື່ອງ ນັບແຕ່ວັນໄດ້ຖືກຖອນໃບຮັບຮອງເປັນຕົ້ນໄປ.

## ໝວດທີ 4
## ຜູ້ມີສ່ວນຮ່ວມ, ສິດ ແລະ ໜ້າທີ່ຂອງຜູ້ມີສ່ວນຮ່ວມ ໃນການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ

**ມາດຕາ 16 ຜູ້ມີສ່ວນຮ່ວມໃນການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ**

ຜູ້ມີສ່ວນຮ່ວມໃນການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ມີດັ່ງນີ້:

1. ຕະຫຼາດຫຼັກຊັບ;
2. ບໍລິສັດຫຼັກຊັບ;
3. ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ.

**ມາດຕາ 17 ສິດ ແລະ ໜ້າທີ່ຂອງຕະຫຼາດຫຼັກຊັບ**

ຕະຫຼາດຫຼັກຊັບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສະໜອງຂໍ້ມູນທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ຍົກເວັ້ນ ຂໍ້ 5 ຂອງຂໍ້ຕົກລົງສະບັບນີ້ ແລະ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນກໍລະນີຈຳເປັນ;

2. ຕິດຕາມ ກວດກາ ການນຳໃຊ້ຂໍ້ມູນຂອງ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຢູ່ ສປປ ລາວ ພາຍຫຼັງທີ່ຕົນໄດ້ສະໜອງໃຫ້;

3. ລາຍງານຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທັນທີ ກໍລະນີເຫັນວ່າ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ມີການ ປັບປຸງ ຫຼື ນຳໃຊ້ ຂໍ້ມູນທີ່ຕົນໄດ້ສະໜອງໃຫ້ໄປໃນທາງທີ່ບໍ່ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ສ້າງລະບຽບການ ແລະ ກົນໄກທີ່ຈຳເປັນ ເພື່ອຮອງຮັບໃຫ້ແກ່ວຽກງານການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ໃນແຕ່ລະໄລຍະ;

5. ລາຍງານການເຮັດສັນຍາກັບແຕ່ລະ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ໃນແຕ່ລະກໍລະນີ ພ້ອມທັງ ສຳເນົາສັນຍາດັ່ງກ່າວຄັດຕິດມາພ້ອມ ແລະ ລາຍງານການສະໜອງຂໍ້ມູນຂອງຕົນຕໍ່ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ມາຍັງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ປະຈຳ ໄຕມາດ 1, ໄຕມາດ 3 ພາຍໃນເວລາ 15 ວັນ ນັບແຕ່ວັນສິ້ນສຸດໄຕມາດ ເປັນຕົ້ນໄປ, 6 ເດືອນຕົ້ນປີ ພາຍໃນເວລາ 45 ວັນ ນັບແຕ່ວັນສິ້ນສຸດໄຕມາດ 2 ເປັນຕົ້ນໄປ ແລະ ປະຈຳປີ ພາຍໃນເວລາ 120 ວັນ ນັບແຕ່ວັນສິ້ນສຸດປີການບັນຊີເປັນຕົ້ນໄປ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 18 ສິດ ແລະ ໜ້າທີ່ຂອງບໍລິສັດຫຼັກຊັບ**

ບໍລິສັດຫຼັກຊັບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສະໜອງຂໍ້ມູນທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ຂໍ້ 5 ຂອງຂໍ້ຕົກ ລົງສະບັບນີ້ ແລະ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນກໍລະນີຈຳເປັນ;

2. ຕິດຕາມ ກວດກາ ການນຳໃຊ້ຂໍ້ມູນຂອງ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຢູ່ ສປປ ລາວ ພາຍຫຼັງທີ່ຕົນໄດ້ສະໜອງໃຫ້;

3. ລາຍງານຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທັນທີ ກໍລະນີເຫັນວ່າ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ມີການປັບປຸງ ຫຼື ນຳໃຊ້ ຂໍ້ມູນທີ່ຕົນໄດ້ສະໜອງໃຫ້ໄປໃນທາງທີ່ບໍ່ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ສ້າງລະບຽບການ ແລະ ກົນໄກທີ່ຈຳເປັນ ເພື່ອຮອງຮັບໃຫ້ແກ່ວຽກງານການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ໃນແຕ່ລະໄລຍະ;

5. ລາຍງານການເຮັດສັນຍາກັບແຕ່ລະ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ໃນແຕ່ລະກໍລະນີ ພ້ອມທັງ ສຳເນົາສັນຍາດັ່ງກ່າວຄັດຕິດມາພ້ອມ ແລະ ລາຍງານການສະໜອງຂໍ້ມູນຂອງຕົນ ຕໍ່ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ມາຍັງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ປະຈຳ ໄຕມາດ 1, ໄຕມາດ 3 ພາຍໃນເວລາ 15 ວັນ ນັບແຕ່ວັນສິ້ນສຸດໄຕມາດ ເປັນຕົ້ນໄປ, 6 ເດືອນຕົ້ນປີ ພາຍໃນເວລາ 45 ວັນ ນັບແຕ່ວັນສິ້ນສຸດໄຕມາດ 2 ເປັນຕົ້ນໄປ ແລະ ປະຈຳປີ ພາຍໃນເວລາ 120 ວັນ ນັບແຕ່ວັນສິ້ນສຸດປີການບັນຊີ ເປັນຕົ້ນໄປ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 19 ສິດ ແລະ ໜ້າທີ່ຂອງບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ**

ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;

2. ໄດ້ຮັບຂໍ້ມູນກ່ຽວກັບວຽກງານຫຼັກຊັບຈາກ ຕະຫຼາດຫຼັກຊັບ ແລະ ບໍລິສັດຫຼັກຊັບ ໂດຍຜ່ານຊ່ອງທາງການເປີດເຜີຍຂໍ້ມູນຂອງ ຕະຫຼາດຫຼັກຊັບ ແລະ ບໍລິສັດຫຼັກຊັບ;

3. ນຳໃຊ້ຂໍ້ມູນກ່ຽວກັບວຽກງານຫຼັກຊັບທີ່ຕົນໄດ້ຮັບ ຈາກ ຕະຫຼາດຫຼັກຊັບ ແລະ ບໍລິສັດຫຼັກຊັບ ໃນທາງທີ່ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ປະຕິບັດຕາມລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ ກ່ຽວກັບການເຄື່ອນໄຫວເຂົ້າມາເອົາຂໍ້ມູນຢູ່ ສປປ ລາວ ເປັນຕົ້ນ: ກົນໄກການເຂົ້າ ອອກ ສປປ ລາວ ຢ່າງຖືກຕ້ອງ ແລະ ເຂັ້ມງວດ ສຳລັບ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຕ່າງປະເທດ;

5. ປະຕິບັດພັນທະທາງດ້ານອາກອນ ແລະ ພັນທະທາງດ້ານການເງິນອື່ນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

6. ລາຍງານການເຄື່ອນໄຫວວຽກງານການໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ປະຈຳໄຕມາດ 1, ໄຕມາດ 3 ພາຍໃນເວລາ 15 ວັນ ນັບແຕ່ວັນສິ້ນສຸດໄຕມາດ ເປັນຕົ້ນໄປ, 6 ເດືອນຕົ້ນປີ ພາຍໃນເວລາ 45 ວັນ ນັບແຕ່ວັນສິ້ນສຸດໄຕມາດ 2 ເປັນຕົ້ນໄປ ແລະ ປະຈຳປີ ພາຍໃນເວລາ 120 ວັນ ນັບແຕ່ວັນສິ້ນສຸດປີການບັນຊີ ເປັນຕົ້ນໄປ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

7. ລາຍງານການເຮັດສັນຍາກັບ ຜູ້ສະໜອງຂໍ້ມູນໃຫ້ຕົນ ແລະ ສັນຍາໃຫ້ບໍລິການກັບ ລູກຄ້າຂອງຕົນ ພາຍຫຼັງໄດ້ເຊັນສັນຍາຮ່ວມກັນ ພ້ອມທັງສຳເນົາສັນຍາດັ່ງກ່າວໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ມື້ເຊັນສັນຍາຮ່ວມກັນ ເປັນຕົ້ນໄປ;

8. ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນ ອັນເນື່ອງຈາກການໃຫ້ບໍລິການຂອງຕົນ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 20 ຂໍ້ຫ້າມສຳລັບ ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ ແລະ ພະນັກງານທີ່ກ່ຽວຂ້ອງ

ຫ້າມ ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ ແລະ ພະນັກງານທີ່ກ່ຽວຂ້ອງ ມີພຶດຕິກຳ ໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ສະໜອງຂໍ້ມູນທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ຂ່າວລື ໃຫ້ແກ່ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຫຼື ສະໜອງຂໍ້ມູນເກີນຂອບເຂດຕາມທີ່ໄດ້ກຳນົດໄວ້ໃນມາດຕາດັ່ງກ່າວ;

2. ບໍ່ລາຍງານຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທັນທີ ກໍລະນີເຫັນວ່າ ບໍລິສັດທີ່ໃຫ້ບໍລິການດ້ານຂໍ້ມູນກ່ຽວກັບວຽກງານຫຼັກຊັບ ມີການ ປັບປຸງ ຫຼື ນຳໃຊ້ ຂໍ້ມູນທີ່ຕົນໄດ້ສະໜອງໃຫ້ໄປໃນທາງທີ່ບໍ່ຖືກຕ້ອງ;

3. ບໍ່ລາຍງານການເຮັດສັນຍາກັບແຕ່ລະ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ໃນແຕ່ລະກໍລະນີ ພ້ອມທັງ ບໍ່ສຳເນົາສັນຍາດັ່ງກ່າວຄັດຕິດມາພ້ອມ ແລະ ບໍ່ລາຍງານການສະໜອງຂໍ້ມູນຂອງຕົນ ຕໍ່ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ມາຍັງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ປະຈຳ ໄຕມາດ, 6 ເດືອນຕົ້ນປີ ແລະ ປີ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

### ມາດຕາ 21 ຂໍ້ຫ້າມສຳລັບ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ແລະ ພະນັກງານທີ່ກ່ຽວຂ້ອງ

ຫ້າມ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ແລະ ພະນັກງານທີ່ກ່ຽວຂ້ອງ ກັບການດຳເນີນທຸລະກິດໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບຢູ່ ສປປ ລາວ ມີພຶດຕິກຳ ໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ໃຫ້ການບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ໂດຍບໍ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

2. ປອມແປງ, ດັດແກ້, ປັບປຸງ, ບິດເບືອນ ຫຼື ເພີ່ມເຕີມ ເນື້ອໃນຂອງຂໍ້ມູນກ່ຽວຂ້ອງກັບວຽກງານຫຼັກຊັບ ບໍ່ວ່າໃນຮູບແບບໃດກໍຕາມ ທີ່ພາໃຫ້ມີຄວາມເສຍຫາຍເກີດຂຶ້ນ;

3. ໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ນອກເໜືອຈາກທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

4. ບໍ່ລາຍງານການເຄື່ອນໄຫວວຽກງານການໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ປະຈຳໄຕມາດ, 6 ເດືອນຕົ້ນປີ ແລະ ປີ ຫຼື ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

5. ບໍ່ລາຍງານການເຮັດສັນຍາກັບ ຜູ້ສະໜອງຂໍ້ມູນໃຫ້ແກ່ຕົນ ແລະ ບໍ່ສຳເນົາສັນຍາໃຫ້ບໍລິການກັບລູກຄ້າຂອງຕົນ ພາຍຫຼັງໄດ້ເຊັນສັນຍາຮ່ວມກັນໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍ່ສະໜອງຂໍ້ມູນ ແລະ ເອກະສານຕ່າງໆ ຫຼື ສະໜອງຂໍ້ມູນ ແລະ ເອກະສານທີ່ບໍ່ຖືກຕ້ອງ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

6. ເຄື່ອນໄຫວເອົາຂໍ້ມູນອື່ນ ທີ່ບໍ່ກ່ຽວຂ້ອງກັບວຽກງານຫຼັກຊັບ ເປັນຕົ້ນ: ຂໍ້ມູນ ທາງດ້ານການເມືອງ, ເສດຖະກິດ-ສັງຄົມ, ວັດທະນະທຳ ແລະ ຂໍ້ມູນອື່ນທີ່ບໍ່ກ່ຽວຂ້ອງ ທີ່ເປັນການລະເມີດກົດໝາຍຂອງ ສປປ ລາວ;

7. ຍື່ນເອກະສານຕໍ່ອາຍຸການຮັບຮອງ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ່ຳກວ່າ 45 ວັນ ກ່ອນວັນໝົດອາຍຸການຮັບຮອງ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

9. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 22 ນະໂຍບາຍຕໍ່ຜູ້ມີຜົນງານ

ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງກັບການໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບຢູ່ ສປປ ລາວ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຕາມຄວາມເໝາະສົມ ຫຼື ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 23 ມາດຕະການຕໍ່ຜູ້ລະເມີດ

ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບຢູ່ ສປປ ລາວ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ;
2. ມາດຕະການປັບໃໝ;
3. ມາດຕະການເພີ່ມເຕີມ.

### ມາດຕາ 24 ມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ

ມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະເບົາ ເປັນຕົ້ນ ບໍ່ໃຫ້ການຮ່ວມມືກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກ

ຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນອື່ນກ່ຽວຂ້ອງ ແລະ ກໍລະນີການລະເມີດອື່ນທີ່ສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;

2. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມຂອງຜູ້ຖືກເສຍຫາຍ ແລະ ຄູ່ກໍລະນີ ສາມາດຕົກລົງ ຫຼື ແກ້ໄຂຮ່ວມກັນໄດ້;

3. ມີພຶດຕິກຳທີ່ຂັດກັບຂໍ້ຕົກລົງສະບັບນີ້ ແຕ່ບໍ່ແມ່ນການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 20 ແລະ ມາດຕາ 21 ຂອງຂໍ້ຕົກລົງສະບັບນີ້;

4. ມີພຶດຕິກຳອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 25 ມາດຕະການປັບໃໝ**

ມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະຮ້າຍແຮງ ຊຶ່ງການລະເມີດສ້າງຄວາມເສຍຫາຍເກີນ 1.000.000 ກີບ ຫຼື ຖືກປະຕິບັດມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດເປັນຄັ້ງທີ 2 ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ;

2. ສະໜອງຂໍ້ມູນທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ຂ່າວລື ໃຫ້ແກ່ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ຫຼື ສະໜອງຂໍ້ມູນເກີນຂອບຕາມທີ່ໄດ້ກຳນົດໄວ້ໃນມາດຕາດັ່ງກ່າວ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

3. ບໍ່ລາຍງານຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທັນທີ ກໍລະນີເຫັນວ່າ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ມີການ ປັບປຸງ ຫຼື ນຳໃຊ້ ຂໍ້ມູນທີ່ຕົນໄດ້ສະໜອງໃຫ້ໄປໃນທາງທີ່ບໍ່ຖືກຕ້ອງ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

4. ບໍ່ລາຍງານການເຮັດສັນຍາກັບແຕ່ລະ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ໃນແຕ່ລະກໍລະນີ ພ້ອມທັງ ບໍ່ສຳເນົາສັນຍາດັ່ງກ່າວຄັດຕິດມາພ້ອມ ແລະ ບໍ່ລາຍງານການສະໜອງຂໍ້ມູນຂອງຕົນຕໍ່ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ມາຍັງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນແຕ່ລະ ໄຕມາດ, 6 ເດືອນຕົ້ນປີ ແລະ ປີ ຈະຖືກປັບໃໝ 5.000.000 ກີບ ຫາ 10.000.000 ກີບ;

5. ໃຫ້ການບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ໂດຍບໍ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

6. ປອມແປງ, ດັດແກ້, ປັບປຸງ, ບິດເບືອນ ຫຼື ເພີ່ມເຕີມ ເນື້ອໃນຂອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ບໍ່ວ່າໃນຮູບແບບໃດກໍຕາມ ທີ່ພາໃຫ້ມີຄວາມເສຍຫາຍເກີດຂຶ້ນ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 100.000.000 ກີບ ພ້ອມທັງຈະຖືກປະຕິບັດມາດຕະການທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;

7. ໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ນອກເໜືອຈາກທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

8. ບໍ່ລາຍງານການເຄື່ອນໄຫວວຽກງານການໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ປະຈຳໄຕມາດ, 6 ເດືອນຕົ້ນປີ ແລະ ປີ ຫຼື ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 20.000.000 ກີບ;

9. ບໍ່ລາຍງານການເຮັດສັນຍາກັບ ຜູ້ສະໜອງຂໍ້ມູນໃຫ້ແກ່ຕົນ ແລະ ບໍ່ສຳເນົາສັນຍາໃຫ້ບໍລິການກັບ ລູກຄ້າຂອງຕົນ ພາຍຫຼັງໄດ້ເຊັນສັນຍາຮ່ວມກັນໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍ່ສະໜອງຂໍ້ມູນ

ແລະ ເອກະສານຕ່າງໆ ຫຼື ສະໜອງຂໍ້ມູນ ແລະ ເອກະສານທີ່ບໍ່ຖືກຕ້ອງ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

10. ເຄື່ອນໄຫວເອົາຂໍ້ມູນອື່ນ ທີ່ບໍ່ກ່ຽວຂ້ອງກັບວຽກງານຫຼັກຊັບ ເປັນຕົ້ນ: ຂໍ້ມູນ ທາງດ້ານການເມືອງ, ເສດຖະກິດ-ສັງຄົມ, ວັດທະນະທຳ ແລະ ຂໍ້ມູນອື່ນທີ່ບໍ່ກ່ຽວຂ້ອງ ທີ່ເປັນການລະເມີດກົດໝາຍຂອງ ສປປ ລາວ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ ພ້ອມທັງຈະຖືກປະຕິບັດມາດຕະການຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;

11. ຍື່ນເອກະສານຕໍ່ອາຍຸການຮັບຮອງ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕໍ່າກວ່າ 45 ວັນ ກ່ອນວັນໝົດອາຍຸການຮັບຮອງ ຈະຖືກປັບໃໝ 5.000.000 ກີບ.

**ມາດຕາ 26 ມາດຕະການເພີ່ມເຕີມ**

ມາດຕະການເພີ່ມເຕີມຕໍ່ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ມີດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ໂຈະການດຳເນີນທຸລະກິດການໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ;
3. ຖອນໃບຮັບຮອງເປັນ ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ;
4. ເປີດເຜີຍກ່ຽວກັບການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງປັບໃໝ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 27 ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ບໍລິສັດສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບ ທັງພາຍໃນ ແລະ ຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການໃຫ້ບໍລິການສະໜອງຂໍ້ມູນກ່ຽວກັບວຽກງານຫຼັກຊັບຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 28 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ສອນໄຊ ສີພັນດອນ